PetroTrade
ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

PTL - DEOCA Group

ລົງນາມສັນຍາຮ່ວມທຸລະກິດສ້າງທາງລົດໄຟ ລາວ-ຫວຽດນາມ

ບໍລິສັດຫຸ້ນສ່ວນນ້ຳມັນເຊື້ອໄຟລາວ ມະຫາຊົນ (PTL) ແລະ ກຸ່ມບໍລິສັດ DEOCA ໄດ້ລົງນາມໃນສັນຍາຮ່ວມທຸລະກິດ ກ່ຽວກັບ ໂຄງການທາງລົດໄຟລາວ-ຫວຽດນາມ ຈາກເມືອງ ມູ້ຈ່າ, ແຂວງກວາງບິ່ງ ຫາ ທ່າເຮືອຫວຸງແອງ ແຂວງ ຮ່າຕິ້ງ, ຫວຽດນາມ.



ສັນຍາການຮ່ວມທຶນໄດ້ລົງນາມຢູ່ນະຄອນຫຼວງວຽງຈັນໃນວັນຈັນ 27 ກຸມພາ 2023. ເຂົ້າຮ່ວມໃນພິທີລົງນາມຄັ້ງນີ້ ມີທ່ານ ນາງ ຄຳຈັນ ວົງແສນບຸນ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ; ທ່ານ ເອກອັກຄະລັດຖະທູດຫວຽດນາມ ປະຈຳລາວ ທ່ານ ຫງວຽນບ໋າຮຸ່ງ; ອະດີດລັດຖະມົນຕີສຳນັກງານນາຍົກລັດຖະມົນຕີ ແລະ ປະທານສະພາບໍລິຫານງານດ້ານຍຸດທະສາດ ແລະ ແຜນການ ບໍລິສັດ PTL Holding ຈຳກັດ, ທ່ານ ອາລຸນແກ້ວ ກິດຕິຄຸນ; ແລະ ເຈົ້າໜ້າທີ່ຂັ້ນສູງຂອງລັດຖະບານອື່ນໆ.

ທ່ານ ຈັນທອນ ສິດທິໄຊ ປະທານບໍລິສັດ ປີໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ (PTL) ກ່າວຄຳເຫັນໃນ ພິທີລົງນາມໃນຂໍ້ຕົກລົງວ່າ: ໂຄງການກໍ່ສ້າງທາງລົດໄຟລາວ-ຫວຽດນາມ ແມ່ນການປະຕິບັດນະໂຍບາຍ ຂອງພັກ ແລະ ລັດຖະບານ ເພື່ອບັນລຸໄດ້ວິໄສທັດຂອງລັດຖະບານລາວ ແລະ ຍຸດທະສາດການພັດທະນາ ປະເທດ ໃນການຫັນປະເທດລາວ ຈາກປະເທດທີ່ມີຊາຍແດນຕິດຈອດ ມາເປັນປະເທດທີ່ມີຊາຍແດນລ່ວງ ຫາກັນ.”

ທາງລົດໄຟດັ່ງກ່າວມີຄວາມອາດສາມາດ ໃນການສ້າງຜົນປະໂຫຍດສູງສຸດ ດ້ານເສດຖະກິດ-ສັງຄົມ ໃຫ້ແກ່ ສອງປະເທດ, ທັງເປັນການເພີ່ມທະວີຄວາມສາມັກຄີແບບພິເສດທີ່ມີມາແຕ່ດົນນານ ແລະ ການຮ່ວມມື ຮອບດ້ານລະຫວ່າງສອງປະເທດ ລາວ-ຫວຽດນາມ.

ທ່ານ ຈັນທອນ ໄດ້ອະທິບາຍເຖິງບົດບາດຂອງປະເທດລາວ ໃນໂຄງການ ເຊິ່ງບໍລິສັດ PTL ດຳເນີນໄປຢ່າງ ຄົບຖ້ວນ ຕາມເງື່ອນໄຂຂອງບົດບັນທຶກຄວາມເຂົ້າໃຈທີ່ໄດ້ລົງນາມກັບລັດຖະບານລາວ ໃນວັນທີ 15 ຕຸລາ 2019 ກ່ຽວກັບການສຶກສາລາຍລະອຽດ, ສຳຫຼວດ ແລະ ອອກແບບທາງລົດໄຟເສັ້ນນີ້.



ເສັ້ນທາງດັ່ງກ່າວຈະແລ່ນຈາກເມືອງທ່າແຂກ ແຂວງຄຳມ່ວນ ໄປຫາຊາຍແດນລາວ-ຫວຽດນາມ ໄລຍະທາງ 139.19 ກິໂລແມັດ.

ທ່ານ ຈັນທອນ ກ່າວວ່າ: ໂຄງການດັ່ງກ່າວມີຄວາມຄືບໜ້າໄປດ້ວຍດີຕາມແຜນການ ແລະ ໄດ້ຮັບການຢືນຢັນຈາກຜົນການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ ແລະ ວິຊາການ ຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານ ເຊັ່ນ: ກົມທາງລົດໄຟ, ກະຊວງໂຍທາທິການ ແລະ ຂົນສົ່ງ.

ທ່ານຍັງໄດ້ແຈ້ງໃຫ້ຊາບກ່ຽວກັບການດຳເນີນການສຶກສາ, ສຳຫຼວດ ແລະ ອອກແບບໂຄງການທາງລົດໄຟ ລາວ-ຫວຽດນາມ ແຕ່ເຂດຊາຍແດນລາວ-ຫວຽດນາມ ເຖິງທ່າກຳປັ່ນວຸງແອ໋ງ, ໂດຍບໍລິສັດເຕັກໂນໂລຊີ ວິສະວະກຳຄົມມະນາຄົມຂົນສົ່ງຂອງປະເທດຫວຽດນາມ (TEDI).

ທ່ານ ຈັນທອນ ກ່າວວ່າ: “DEOCA ໄດ້ເຊັນສັນຍາຈ້າງງານກັບ TEDI ທີ່ໄດ້ສຳເລັດການສຶກສາຄວາມເປັນໄປໄດ້ທາງດ້ານເຕັກນິກເສດຖະກິດເບື້ອງຕົ້ນ ແລະ ການສຶກສາວຽກງານສຳຫຼວດທໍລະນີສາດ, ອຸທົກກະສາດ, ການຄິດໄລ່ການຈະລາຈອນ, ມາດຕະຖານເຕັກນິກ, ການອອກແບບເບື້ອງຕົ້ນ ແລະ ຮູບແບບການລົງທຶນ.



ຄາດວ່າ, ບັນດາເອກະສານດັ່ງກ່າວຈະຖືກຍື່ນເພື່ອເລີ່ມຕົ້ນຂະບວນການຂໍອະນຸຍາດລົງທຶນຈາກລັດຖະບານ ຫວຽດນາມ ໃນໄຕມາດທີ 1 ປີ 2023 ຕາມຮູບແບບການລົງທຶນຂອງ ພາກເອກະຊົນທີ່ໄດ້ກຳນົດໄວ້ໃນກົດໝາຍຫວຽດນາມ.

“ພວກເຮົາຫວັງວ່າ ຈະໄດ້ຮັບການອະນຸມັດຈາກ ລັດຖະບານຫວຽດນາມ ໃນໄຕມາດທຳອິດຂອງປີ 2024,” ໂດຍກ່າວວ່າ, ເປົ້າໝາຍລວມຂອງໂຄງການແມ່ນໃຫ້ທາງລົດໄຟດຳເນີນໄປໃນໄຕມາດທຳອິດຂອງປີ 2027.

ພ້ອມກັນນັ້ນ, ທ່ານ ໂຮມິນຮ່ວາງ, ປະທານສະພາບໍລິຫານ ບໍລິສັດຫຸ້ນສ່ວນ DEOCA ຂອງກຸ່ມ DEOCA ໄດ້ກ່າວວ່າ, ທ່ານມີຄວາມຍິນດີທີ່ໄດ້ເປັນສ່ວນໜຶ່ງໃນການຮ່ວມມືກັບ PTL ໃນໂຄງການທາງລົດໄຟລາວ-ຫວຽດນາມ. ແນ່ນອນວ່າສິ່ງທ້າທາຍ, ອຸປະສັກ ແລະ ບັນຫາຕ່າງໆ ຍັງຄົງມີຢູ່ຂ້າງໜ້າ, ແຕ່ໂຊກດີທີ່ໄດ້ຮັບການສະໜັບສະໜູນຢ່າງຕໍ່ເນື່ອງຈາກ ລັດຖະບານລາວ ແລະ ຫວຽດນາມ ທີ່ພ້ອມກັນປະຕິບັດໂຄງການນີ້ ໃຫ້ສາມາດບັນລຸເປົ້າໝາຍໄດ້.



ທ່ານ ໂຮມິນຮ່ວາງ ເນັ້ນໜັກວ່າ, ກ່ຽວກັບການຮ່ວມມືລະຫວ່າງ PTL ແລະ DEOCA, ຈະໄດ້ຈັດກອງປະຊຸມຖະແຫຼງຂ່າວ ເພື່ອແຈ້ງໃຫ້ສັງຄົມຮັບຮູ້ເຖິງຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ ແລະ ກອງປະຊຸມປຶກສາຫາລືອື່ນໆ ກໍ່ຈະໄດ້ຮັບການຈັດຕັ້ງປະຕິບັດຕາມກັນມາ.

ຕາມຂໍ້ມູນໃນເບື້ອງຕົ້ນ, ໂຄງການທາງລົດໄຟລາວ-ຫວຽດນາມ ແມ່ນທາງລົດໄຟຫົວຈັກໄຟຟ້າຄວາມໄວສູງທີ່ມີມູນຄ່າການລົງທຶນປະມານ 5 ຕື້ໂດລາສະຫະລັດ. ທາງລົດໄຟຈະກວມເອົາໄລຍະທາງປະມານ 452 ກິໂລແມັດ.

ເສັ້ນທາງລົດໄຟຈາກວ ຽງຈັນ ຫາ ເມືອງທ່າແຂກ ແຂວງຄຳມ່ວນ ມີຄວາມຍາວປະມານ 312,8 ກິໂລແມັດ ແລະ ເສັ້ນທາງຈາກເມືອງທ່າແຂກ ຫາ ຊາຍແດນຫວຽດນາມ ມີຄວາມຍາວປະມານ 139,19 ກິໂລແມັດ. ຢູ່ຝ່າຍຫວຽດນາມ, ທາງລົດໄຟຈະຍາວປະມານ 102,74 ກິໂລແມັດ.